ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ

ເລກທີ 262 /ລບ

ນະຄອນຫຼວງວຽງຈັນ, ວັນທີ 09 / 05 / 25

# ດຳລັດ
# ວ່າດ້ວຍນັກຄົ້ນຄວ້າວິທະຍາສາດ

- ອີງຕາມ ກົດໝາຍວ່າດ້ວຍ ລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍວ່າດ້ວຍ ວິທະຍາສາດ ແລະ ເຕັກໂນໂລຊີ ສະບັບເລກທີ 26/ສພຊ, ລົງວັນທີ 29 ທັນວາ 2022;
- ອີງຕາມ ໜັງສືສະເໜີ ຂອງກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 821/ສສກ, ລົງວັນທີ 25 ມີນາ 2025.

**ລັດຖະບານ ອອກດຳລັດ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ກຳນົດ ຫຼັກການ, ລະບຽບການ, ມາດຕະການ ກ່ຽວກັບການຄຸ້ມຄອງ, ສົ່ງເສີມ, ຕິດຕາມ ກວດກາ ການເຄື່ອນໄຫວວຽກງານການຄົ້ນຄວ້າ ຂອງນັກຄົ້ນຄວ້າວິທະຍາສາດ ເພື່ອໃຫ້ການຄົ້ນຄວ້າວິທະຍາສາດ ລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ ແນໃສ່ສ້າງເງື່ອນໄຂ ໃຫ້ນັກຄົ້ນຄວ້າວິທະຍາສາດ ທັງພາກລັດ ແລະ ພາກເອກະຊົນ ດຳເນີນການຄົ້ນຄວ້າວິທະຍາສາດ, ພັດທະນາເຕັກໂນໂລຊີ, ນະວັດຕະກຳໃໝ່ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ ແລະ ເຊື່ອມໂຍງກັບພາກພື້ນ ແລະ ສາກົນ.

**ມາດຕາ 2 ນັກຄົ້ນຄວ້າວິທະຍາສາດ**

ນັກຄົ້ນຄວ້າວິທະຍາສາດ ແມ່ນ ບຸກຄົນ ທີ່ດຳເນີນການຄົ້ນຄວ້າວິທະຍາສາດ ເພື່ອສ້າງຄວາມຮູ້ ຄວາມເຂົ້າໃຈ ກ່ຽວກັບ ປະກົດການ, ທາດແທ້, ກົດເກນ ຂອງທຳມະຊາດ ແລະ ສັງຄົມ ທີ່ສາມາດປະຍຸກໃຊ້ເຂົ້າໃນການພັດທະນາ ເຕັກໂນໂລຊີ, ນະວັດຕະກຳ ແລະ ສ້າງຜະລິດຕະພັນ ອອກຮັບໃຊ້ສັງຄົມ.

## ມາດຕາ 3 ການອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ ມີ ຄວາມໝາຍ ດັ່ງນີ້:

1. **ນັກຄົ້ນຄວ້າ** ໝາຍເຖິງ ບຸກຄົນທີ່ເຮັດການຄົ້ນຄວ້າໃນເລື່ອງໃດໜຶ່ງ ໃນສາຂາທີ່ຕົນມີຄວາມຊ່ຽວຊານຢ່າງເປັນລະບົບ ໂດຍໃຊ້ວິທີການເກັບຂໍ້ມູນ ວິເຄາະ ວິໄຈ ໂດຍມີຈຸດໝາຍໃນການແກ້ໄຂບັນຫາໃດໜຶ່ງ ຫຼື ພັດທະນາ ຄວາມເຂົ້າໃຈໃນເລື່ອງນັ້ນໆ ແລະ ແນໃສ່ສ້າງຜະລິດຕະພັນອອກຮັບໃຊ້ສັງຄົມ;

2. **ເຕັກໂນໂລຊີ** ໝາຍເຖິງ ຂະບວນການຫັນປ່ຽນຊັບພະຍາກອນ ໃຫ້ກາຍເປັນຜະລິດຕະພັນ ເພື່ອຮັບໃຊ້ສັງຄົມ ດ້ວຍການນຳໃຊ້ລະບົບເຄື່ອງມື, ພະລັງງານ, ພາຫະນະ, ວິທີການ ແລະ ກຳມະວິທີການຜະລິດສະເພາະ;

3. **ນະວັດຕະກຳ** ໝາຍເຖິງ ການນຳໃຊ້ຄວາມຮູ້, ຄວາມສາມາດ, ກຳມະວິທີການຜະລິດ ແລະ ປະສົບການດ້ານວິທະຍາສາດ ແລະ ເຕັກໂນໂລຊີ ເພື່ອຄົ້ນຄວ້າ, ປະດິດສ້າງ, ບໍລິການ, ການພັດທະນາຜະລິດຕະພັນ, ສິນຄ້າທີ່ມີຄຸນນະພາບສູງ ໃນຮູບແບບໃໝ່ ອອກສູ່ສັງຄົມ.

## ມາດຕາ 4 ນະໂຍບາຍ ຂອງລັດ ກ່ຽວກັບການເຄື່ອນໄຫວວຽກງານ ຂອງນັກຄົ້ນຄວ້າວິທະຍາສາດ

ລັດ ໃຫ້ຄວາມສຳຄັນກ່ຽວກັບການເຄື່ອນໄຫວວຽກງານ ຂອງນັກຄົ້ນຄວ້າວິທະຍາສາດ ລວມທັງ ການນຳໃຊ້ ຜົນການຄົ້ນຄວ້າວິທະຍາສາດ ດ້ວຍການສ້າງໂຄງລ່າງພື້ນຖານ, ສະໜອງພາຫະນະ ແລະ ວັດຖຸປະກອນທີ່ຈຳເປັນ ປະຕິບັດນະໂຍບາຍ ແລະ ສ້າງເງື່ອນໄຂອຳນວຍຄວາມສະດວກອື່ນ ໃຫ້ແກ່ການເຄື່ອນໄຫວວຽກງານດັ່ງກ່າວ.

ລັດ ຊຸກຍູ້ ແລະ ສົ່ງເສີມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດປະກອບສ່ວນ ແລະ ມີສ່ວນຮ່ວມ ເຂົ້າໃນການຄົ້ນຄວ້າວິທະຍາສາດ, ພັດທະນາເຕັກໂນໂລຊີ ແລະ ນະວັດຕະກຳຢ່າງມີຄຸນນະພາບ, ມີຫົວຄິດປະດິດສ້າງ ແລະ ເກີດປະໂຫຍດສູງສຸດແກ່ປະເທດຊາດ.

## ມາດຕາ 5 ຫຼັກການ ກ່ຽວກັບການເຄື່ອນໄຫວວຽກງານ ຂອງນັກຄົ້ນຄວ້າວິທະຍາສາດ

ການເຄື່ອນໄຫວວຽກງານ ຂອງນັກຄົ້ນຄວ້າວິທະຍາສາດ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບແນວທາງ ນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ, ຍຸດທະສາດ ແລະ ແຜນດຳເນີນງານແຫ່ງຊາດດ້ານວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກຳ;

2. ຮັບປະກັນຄວາມປອດໄພຕໍ່ ຊີວິດ, ສຸຂະພາບ, ຊັບສິນ, ສິ່ງແວດລ້ອມ, ສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງປະຊາຊົນ ແລະ ຂອງຊາດ;

3. ຮັບປະກັນຄວາມສະເໝີພາບ, ພາວະວິໄສ, ໂປ່ງໃສ, ຍຸຕິທຳ ແລະ ສາມາດກວດສອບໄດ້;

4. ມີຈັນຍາບັນ ແລະ ຈັນຍາທຳ ໃນການຄົ້ນຄວ້າວິທະຍາສາດ.

## ມາດຕາ 6 ຂອບເຂດການນຳໃຊ້ດຳລັດ

ດຳລັດສະບັບນີ້ ນຳໃຊ້ ສຳລັບ ນັກຄົ້ນຄວ້າວິທະຍາສາດ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ພາກລັດ ແລະ ເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ ທີ່ພົວພັນກັບການເຄື່ອນໄຫວວຽກງານ ຂອງນັກຄົ້ນຄວ້າວິທະຍາສາດ ຢູ່ ສປປ ລາວ.

## ໝວດທີ 2

## ຕຳແໜ່ງ, ມາດຕະຖານ ແລະ ເງື່ອນໄຂ ນັກຄົ້ນຄວ້າວິທະຍາສາດ

**ມາດຕາ 7 ຕຳແໜ່ງນັກຄົ້ນຄວ້າວິທະຍາສາດ**

ຕຳແໜ່ງນັກຄົ້ນຄວ້າວິທະຍາສາດ ແມ່ນ ຖານະ ຫຼື ລະດັບທາງດ້ານວິຊາການ ຂອງນັກຄົ້ນຄວ້າວິທະຍາສາດ ບົນພື້ນຖານຄວາມຮູ້, ຄວາມສາມາດ, ວຸດທິການສຶກສາ, ປະສົບການ ແລະ ໄດ້ຮັບການຢັ້ງຢືນຜົນງານການຄົ້ນຄວ້າວິທະຍາສາດ ຈາກສະພາວິທະຍາສາດແຫ່ງຊາດ.

ຕຳແໜ່ງນັກຄົ້ນຄວ້າວິທະຍາສາດ ມີ ສີ່ ລະດັບ ດັ່ງນີ້:

1. ນັກຄົ້ນຄວ້າວິທະຍາສາດ ລະດັບພື້ນຖານ;
2. ນັກຄົ້ນຄວ້າວິທະຍາສາດ ລະດັບປະສົບການ;
3. ນັກຄົ້ນຄວ້າວິທະຍາສາດ ລະດັບຊຳນານງານ;
4. ນັກຄົ້ນຄວ້າວິທະຍາສາດ ລະດັບຊ່ຽວຊານ.

**ມາດຕາ 8 ມາດຕະຖານ ຂອງຜູ້ ທີ່ຈະໄດ້ຮັບຕຳແໜ່ງນັກຄົ້ນຄວ້າວິທະຍາສາດ**

ຜູ້ ທີ່ຈະໄດ້ຮັບຕຳແໜ່ງນັກຄົ້ນຄວ້າວິທະຍາສາດ ມີ ມາດຕະຖານ ດັ່ງນີ້:

1. ມີວຸດທິການສຶກສາ ລະດັບປະລິນຍາໂທຂຶ້ນໄປ ທີ່ສອດຄ່ອງ ແລະ ເໝາະສົມກັບ ລະດັບວິຊາການໃນການຄົ້ນຄວ້າ ແລະ ພັດທະນານະວັດຕະກຳ;

2. ມີຄວາມສາມາດໃນການວິເຄາະ ວິໄຈຂໍ້ມູນ ແລະ ສ້າງສົມມຸດຕິຖານ ຫຼື ຄຳຖາມໃນການຄົ້ນຄວ້າ;

3. ມີຄວາມຊຳນານ ກ່ຽວກັບວິທີການຄົ້ນຄວ້າ, ອອກແບບວິທີການຈັດຕັ້ງປະຕິບັດ, ການເກັບກຳຂໍ້ມູນ, ວິທີການວິເຄາະຕົວເລກຂໍ້ມູນ ແລະ ອຸປະກອນອື່ນ ທີ່ນຳໃຊ້ຄົ້ນຄວ້າ;

4. ມີປະສົບການ ໃນການຄົ້ນຄວ້າວິທະຍາສາດ, ມີຄວາມເປັນຊ່ຽວຊານ, ຄວາມຮູ້, ທັກສະ ແລະ ວຸດທິພາວະໃນຂົງເຂດ ຫຼື ຂະແໜງການ ທີ່ເຮັດການຄົ້ນຄວ້າ ຫ້າປີ ຂຶ້ນໄປ;

5. ມີຄວາມສາມາດໃນການສື່ສານ ແນວຄວາມຄິດການຄົ້ນຄວ້າ, ການຄົ້ນພົບ ແລະ ວິທີການ ຢ່າງມີປະສິດທິພາບ ໃຫ້ແກ່ຜູ້ທີ່ເປັນຊ່ຽວຊານ ແລະ ບໍ່ເປັນຊ່ຽວຊານ ໂດຍວິທີການບັນຍາຍ ແລະ ເປັນລາຍລັກອັກສອນ;

6. ມີສຸຂະພາບດີ, ເສີມຂະຫຍາຍສະຕິປັນຍາ, ຫົວຄິດປະດິດສ້າງ ຂອງຕົນ ແລະ ມະຫາຊົນ.

**ມາດຕາ 9 ເງື່ອນໄຂຕຳແໜ່ງນັກຄົ້ນຄວ້າວິທະຍາສາດລະດັບພື້ນຖານ**

ຜູ້ ທີ່ຈະໄດ້ຮັບຕຳແໜ່ງນັກຄົ້ນຄວ້າວິທະຍາສາດ ລະດັບພື້ນຖານ ມີ ເງື່ອນໄຂ ດັ່ງນີ້:

1. ມີຄວາມເຂົ້າໃຈທີ່ຖືກຕ້ອງ ກ່ຽວກັບຫົວຂໍ້ທີ່ຈະຄົ້ນຄວ້າ ແລະ ດຳເນີນການວິໄຈ, ການຄົ້ນຄວ້າວິທະຍາສາດ ພາຍໃຕ້ການຊີ້ນຳ ຂອງອົງການຈັດຕັ້ງ, ສະຖາບັນການຄົ້ນຄວ້າ ຫຼື ສະຖານການສຶກສາຊັ້ນສູງ ທີ່ກ່ຽວຂ້ອງ;

2. ມີຄວາມຮູ້ທາງດ້ານ ວິຊາການ, ວິທີການ ແລະ ຂັ້ນຕອນ ການຄົ້ນຄວ້າວິທະຍາສາດ ທີ່ສາມາດອະທິບາຍ, ວິເຄາະ, ປະເມີນ ແລະ ລວບລວມແນວຄວາມຄິດໃໝ່ ທາງດ້ານວິຊາການ;

3. ມີຜົນງານການຄົ້ນຄວ້າວິທະຍາສາດ ທີ່ຕົນ ເປັນນັກຄົ້ນຄວ້າຫຼັກ ຈຳນວນ ຫ້າບົດ ທີ່ໄດ້ຮັບການຕີພິມລົງໃນວາລະສານ ຢູ່ ພາຍໃນ ສາມບົດ ແລະ ຕ່າງປະເທດ ສອງບົດ ໃນໄລຍະບໍ່ເກີນ ສິບປີ ແລະ ມີຜົນງານການຂຽນປຶ້ມຕຳລາ ທີ່ຕົນ ເປັນຫຼັກ ຢ່າງໜ້ອຍ ໜຶ່ງ ເຫຼັ້ມ ກ່ອນການສະເໜີແຕ່ງຕັ້ງ;

4. ສາມາດອະທິບາຍ ຜົນການຄົ້ນຄວ້າວິທະຍາສາດ ໃຫ້ຄຳປຶກສາ ແລະ ແນະນຳທາງດ້ານວິຊາການ ຢ່າງມີປະສິດທິພາບ;

5. ນຳສະເໜີຜົນການຄົ້ນຄວ້າ ຂອງຕົນ ໃນກອງປະຊຸມວິທະຍາສາດ ທັງພາຍໃນ ແລະ ຕ່າງປະເທດ ຢ່າງໜ້ອຍຈຳນວນ ສາມ ຄັ້ງ ພ້ອມທັງຄັດຕິດເອກະສານ ທີ່ກ່ຽວຂ້ອງດັ່ງກ່າວ;

6. ມີຄວາມຮູ້ ແລະ ຄວາມສາມາດ ດ້ານພາສາຕ່າງປະເທດ ໃດໜຶ່ງ ໃນລະດັບແນ່ນອນ ທີ່ສາມາດນຳໃຊ້ເຂົ້າໃນການຄົ້ນຄວ້າວິທະຍາສາດ ແລະ ການພົວພັນສື່ສານ.

**ມາດຕາ 10 ເງື່ອນໄຂຕຳແໜ່ງນັກຄົ້ນຄວ້າວິທະຍາສາດລະດັບປະສົບການ**

ຜູ້ ທີ່ຈະໄດ້ຮັບຕຳແໜ່ງນັກຄົ້ນຄວ້າວິທະຍາສາດ ລະດັບປະສົບການ ນອກຈາກມີເງື່ອນໄຂ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 9 ຂອງດຳລັດສະບັບນີ້ ຍັງມີ ເງື່ອນໄຂ ດັ່ງນີ້:

1. ມີຄວາມເຂົ້າໃຈ ຢ່າງເປັນລະບົບ ແລະ ມີປະສົບການ ໃນການຄົ້ນຄວ້າ ກ່ຽວກັບສາຂາວິຊາ ທີ່ກ່ຽວຂ້ອງ;

2. ມີຫົວຄິດປະດິດສ້າງ, ສາມາດອອກແບບ, ດຳເນີນ ແລະ ປັບປຸງໂຄງການຄົ້ນຄວ້າ;

3. ມີຜົນງານການຄົ້ນຄວ້າວິທະຍາສາດ ທີ່ຕົນເປັນນັກຄົ້ນຄວ້າຫຼັກ ຈຳນວນ ຫ້າບົດ ທີ່ໄດ້ຮັບການຕີພິມລົງໃນວາລະສານ ຢູ່ ພາຍໃນ ສາມບົດ ແລະ ຕ່າງປະເທດ ສອງບົດ ໃນໄລຍະບໍ່ເກີນ ສິບປີ ແລະ ມີຜົນງານການຂຽນ ປຶ້ມຕຳລາຢ່າງໜ້ອຍ ສອງເຫຼັ້ມ ທີ່ຕົນເປັນຫຼັກ ໜຶ່ງເຫຼັ້ມ ແລະ ທີ່ຕົນຮ່ວມ ໜຶ່ງເຫຼັ້ມ ກ່ອນການສະເໜີແຕ່ງຕັ້ງ;

4. ເປັນຄະນະກຳມະການ, ທີ່ປຶກສາໃຫ້ໂຄງການຄົ້ນຄວ້າວິທະຍາສາດ ໃດໜຶ່ງ ຢູ່ພາຍໃນ ແລະ ຕ່າງປະເທດຢ່າງໜ້ອຍ ຫ້າໂຄງການ;

5. ມີຜົນງານການຄົ້ນຄວ້າວິທະຍາສາດ ທີ່ຕົນ ເປັນນັກຄົ້ນຄວ້າຫຼັກ ແລະ ນັກຄົ້ນຄວ້າຮ່ວມ ຖືກນຳໄປອ້າງອີງໃນລະດັບປະເທດ, ພາກພື້ນ ແລະ ສາກົນ ຢ່າງໜ້ອຍ ໜຶ່ງຮ້ອຍຄັ້ງ;

6.ສາມາດອະທິບາຍ ແລະ ນຳສະເໜີຜົນ ການຄົ້ນຄວ້າວິທະຍາສາດ ຕໍ່ ກຸ່ມນັກຄົ້ນຄວ້າວິທະຍາສາດ, ຊຸມຊົນ, ສັງຄົມ ແລະ ກອງປະຊຸມເຜີຍແຜ່ການຄົ້ນຄວ້າວິທະຍາສາດ ທັງພາຍໃນ ແລະ ຕ່າງປະເທດ ຢ່າງໜ້ອຍ ສາມຄັ້ງ ພ້ອມທັງ ຄັດຕິດເອກະສານອ້າງອີງ;

7. ເປັນຜູ້ມີປະສົບການສູງ ໃນການຄົ້ນຄວ້າວິທະຍາສາດ ແລະ ໄດ້ເຂົ້າຮ່ວມສ້າງບັນດາເອກະສານສຳລັບ ກອງປະຊຸມ, ສຳມະນາ, ຝຶກອົບຮົມ ແລະ ສ້າງບັນດານິຕິກຳ, ສ້າງນະໂຍບາຍ ແລະ ສຳລັບການຄຸ້ມຄອງສົ່ງເສີມການຄົ້ນຄວ້າວິທະຍາສາດ ໃນຂົງເຂດວຽກງານ ຂອງຕົນ ພ້ອມທັງ ຄັດຕິດເອກະສານອ້າງອີງ;

8. ເປັນເຈົ້າການ ໃນການສ້າງຄວາມເຂັ້ມແຂງ ໃນການຄົ້ນຄວ້າວິທະຍາສາດ ກ່ຽວກັບສາຂາວິຊາກ່ຽວຂ້ອງສາມາດກຳນົດເປົ້າໝາຍ ໃນການສ້າງອາຊີບ ແລະ ພັດທະນາຄວາມອາດສາມາດ ໃນການຈ້າງງານ.

**ມາດຕາ 11 ເງື່ອນໄຂຕຳແໜ່ງນັກຄົ້ນຄວ້າວິທະຍາສາດລະດັບຊຳນານງານ**

ຜູ້ ທີ່ຈະໄດ້ຮັບຕຳແໜ່ງນັກຄົ້ນຄວ້າວິທະຍາສາດລະດັບຊຳນານງານ ນອກຈາກ ມີເງື່ອນໄຂ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 10 ຂອງດຳລັດສະບັບນີ້ ຍັງມີ ເງື່ອນໄຂ ດັ່ງນີ້:

1. ມີຊື່ສຽງ ແລະ ເປັນທີ່ຍອມຮັບບົນພື້ນຖານ ຜົນງານການຄົ້ນຄວ້າວິທະຍາສາດ ທີ່ດີເດັ່ນ ໃນສາຂາວິຊາສະເພາະ ທີ່ຕົນຊໍານານງານ;

2. ມີຜົນງານການຄົ້ນຄວ້າວິທະຍາສາດ ທີ່ດີເດັ່ນ ແລະ ມີຊື່ສຽງ ສາມາດປະກອບສ່ວນເຂົ້າໃນການພັດທະນາວິຊາການ ການບໍລິຫານຄຸ້ມຄອງໃນອົງກອນ ຂອງຕົນ ແລະ ພັດທະນາຊຸມຊົນ;

3. ເປັນຜູ້ນໍາພາ ໂຄງການຄົ້ນຄວ້າວິທະຍາສາດ ລະດັບຊາດ ຂອງພາຍໃນ ແລະ ໂຄງການຮ່ວມມືກັບສາກົນ ພ້ອມທັງສ້າງແຮງຈູງໃຈ ໃຫ້ແກ່ນັກຄົ້ນຄວ້າຮຸ່ນໜຸ່ມ;

4. ສ້າງເຄືອຂ່າຍຮ່ວມມືການຄົ້ນຄວ້າວິທະຍາສາດ ຮ່ວມກັບຂະແໜງການທີ່ກ່ຽວຂ້ອງ ພາຍໃນ ແລະ ສາກົນ ຢ່າງກວ້າງຂວາງ;

5. ນໍາໃຊ້ ຜົນການຄົ້ນຄວ້າວິທະຍາສາດ ເຂົ້າໃນການພັດທະນາສ້າງຄວາມເຂັ້ມແຂງ ຂອງຊຸມຊົນ, ສ້າງຄວາມເປັນເອກະລັກ ຂອງຊາດ ແລະ ມີຈິນຕະນາການໃໝ່ ດ້ານນະວັດຕະກໍາ;

6. ມີຜົນງານ ການຄົ້ນຄວ້າວິທະຍາສາດ ທີ່ຕົນເປັນຜູ້ນໍາພາຈໍານວນ ຫ້າບົດ ທີ່ໄດ້ຮັບການຕີພິມລົງໃນວາລະສານສາກົນ ຈໍານວນ ຫ້າບົດ, ມີໃບຢັ້ງຢືນຜົນງານການຄົ້ນຄວ້າ ທີ່ໄດ້ຈົດທະບຽນສິດທິບັດ ຫຼື ອະນຸສິດທິບັດ ຫຼື ໃບຢັ້ງຢືນຈົດທະບຽນພັນພືດໃໝ່ ຢ່າງໜ້ອຍ ສອງໃບ, ໃນໄລຍະບໍ່ເກີນ ສິບປີ ແລະ ມີຜົນງານການຂຽນປຶ້ມຕໍາລາ ຢ່າງໜ້ອຍ ສາມເຫຼັ້ມ, ໃນນັ້ນ ຕົນ ເປັນຫຼັກຈໍານວນ ສອງເຫຼັ້ມ ແລະ ທີ່ຕົນຮ່ວມຈໍານວນໜຶ່ງ ເຫຼັ້ມ;

7. ເປັນເຈົ້າການໃນການກໍານົດທິດທາງ, ກໍານົດແຜນການພັດທະນາການຄົ້ນຄວ້າວິທະຍາສາດ ໃຫ້ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ;

8. ເປັນເຈົ້າການລະດົມ ແລະ ສ້າງແຫຼ່ງທຶນພັດທະນາວຽກງານ ຄົ້ນຄວ້າວິທະຍາສາດ.

**ມາດຕາ 12 ເງື່ອນໄຂຕໍາແໜ່ງນັກຄົ້ນຄວ້າວິທະຍາສາດລະດັບຊ່ຽວຊານ**

ຜູ້ ທີ່ຈະໄດ້ຮັບຕໍາແໜ່ງນັກຄົ້ນຄວ້າວິທະຍາສາດລະດັບຊ່ຽວຊານ ນອກຈາກມີ ເງື່ອນໄຂ ຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 11 ຂອງດໍາລັດສະບັບນີ້ ຍັງມີ ເງື່ອນໄຂ ດັ່ງນີ້:

1. ເປັນຜູ້ນໍາໃນການຄົ້ນຄວ້າວິທະຍາສາດ ດ້ານນະວັດຕະກໍາ, ຜົນ ຂອງການຄົ້ນຄວ້າວິທະຍາສາດສ້າງເປັນແນວຄວາມຄິດໃໝ່, ຄວາມຮູ້ໃໝ່, ວິທີການໃໝ່ທີ່ແຕກຕ່າງ ແລະ ມີຂະບວນການວິວັດທີ່ກ້າວໜ້າ;

2. ເປັນຜູ້ສ້າງໂຄງການຄົ້ນຄວ້າວິທະຍາສາດທີ່ເປັນເອກະລັກ, ບູລິມະສິດທີ່ແຕກຕ່າງດ້ວຍແນວຄວາມຄິດໃໝ່ ແລະ ທັດສະນະທີ່ກ້າວໜ້າ;

3. ຜົນ ຂອງການຄົ້ນຄວ້າວິທະຍາສາດ ສິ່ງຜົນປະໂຫຍດ ໃນໄລຍະຍາວຕໍ່ການສ້າງເປັນທິດສະດີ, ພາກປະຕິບັດຕົວຈິງ ແລະ ແນວທາງນະໂຍບາຍ ທີ່ເຮັດໃຫ້ການປ່ຽນແປງໄປໃນທາງທີ່ດີ ໃນອະນາຄົດ;

4. ດໍາເນີນການຄົ້ນຄວ້າວິທະຍາສາດ ລະດັບສາກົນ ແລະ ມີຜົນງານການຄົ້ນຄວ້າວິທະຍາສາດ ທີ່ຖືກນໍາໃຊ້ຢ່າງກວ້າງຂວາງ;

5. ເປັນເຈົ້າການໃນການສ້າງແຜນຍຸດທະສາດ, ວິໄສທັດ, ກໍານົດ ຈຸດສຸມໃນການພັດທະນາວຽກງານວິທະຍາສາດ, ເຕັກໂນໂລຊີ ແລະ ນະວັດຕະກໍາ ຂອງຊາດ, ການຈັດຕັ້ງ ແລະ ທ້ອງຖິ່ນ.

**ມາດຕາ 13 ການທຽບ ແລະ ການເລື່ອນຂັ້ນ ລະດັບຕໍາແໜ່ງນັກຄົ້ນຄວ້າວິທະຍາສາດ**

ການທຽບ ລະດັບຕໍາແໜ່ງນັກຄົ້ນຄວ້າວິທະຍາສາດ ແມ່ນ ການທຽບຜົນການຄົ້ນຄວ້າວິທະຍາສາດຂອງບຸກຄົນ ຕາມເງື່ອນໄຂ ທີ່ນັກຄົ້ນຄວ້າວິທະຍາສາດ ຈະໄດ້ຮັບ.

ການເລື່ອນຂ້າມ ລະດັບຕຳແໜ່ງນັກຄົ້ນຄວ້າວິທະຍາສາດ ແມ່ນ ການເລື່ອນຈາກລະດັບຕຳແໜ່ງນັກຄົ້ນຄວ້າວິທະຍາສາດ ທີ່ໄດ້ຮັບ ຂ້າມໄປໃນລະດັບໃດໜຶ່ງ ທີ່ສູງກວ່າ ຕາມເງື່ອນໄຂ ທີ່ນັກຄົ້ນຄວ້າວິທະຍາສາດຈະໄດ້ຮັບ.

## ໝວດທີ 3
## ການແຕ່ງຕັ້ງ, ອາຍຸກະສຽນ ແລະ ການສິ້ນສຸດຕຳແໜ່ງ ນັກຄົ້ນຄວ້າວິທະຍາສາດ

### ມາດຕາ 14 ການແຕ່ງຕັ້ງຕຳແໜ່ງນັກຄົ້ນຄວ້າວິທະຍາສາດ

ນາຍົກລັດຖະມົນຕີ ເປັນຜູ້ແຕ່ງຕັ້ງຕຳແໜ່ງນັກຄົ້ນຄວ້າວິທະຍາສາດ ລະດັບຊ່ຽວຊານ ແລະ ນັກຄົ້ນຄວ້າວິທະຍາສາດລະດັບຊຳນານງານ ຕາມການສະເໜີ ຂອງກະຊວງ, ອົງການ ບົນພື້ນຖານການພິຈາລະນາ ຮັບຮອງຂອງສະພາວິທະຍາສາດແຫ່ງຊາດ.

ປະທານສະພາວິທະຍາສາດແຫ່ງຊາດ ເປັນຜູ້ແຕ່ງຕັ້ງຕຳແໜ່ງ ນັກຄົ້ນຄວ້າວິທະຍາສາດ ລະດັບປະສົບການ ແລະ ນັກຄົ້ນຄວ້າວິທະຍາສາດ ລະດັບພື້ນຖານ ຕາມການສະເໜີ ຂອງກະຊວງ, ອົງການ ບົນພື້ນຖານ ການພິຈາລະນາ ຮັບຮອງ ຂອງສະພາວິທະຍາສາດ ຂອງຂະແໜງການ.

ສະພາວິທະຍາສາດແຫ່ງຊາດ ເປັນຜູ້ອອກລະບຽບການ ກ່ຽວກັບ ການສະເໜີແຕ່ງຕັ້ງຕຳແໜ່ງນັກຄົ້ນຄວ້າວິທະຍາສາດ.

### ມາດຕາ 15 ອາຍຸກະສຽນການເປັນນັກຄົ້ນຄວ້າວິທະຍາສາດ

ອາຍຸກະສຽນການເປັນນັກຄົ້ນຄວ້າວິທະຍາສາດ ແມ່ນ ຫົກສິບ ປີ ແຕ່ສາມາດຕໍ່ໄດ້ບົນພື້ນຖານການຢັ້ງຢືນ ຈາກກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ຕາມແຕ່ລະກໍລະນີ ດັ່ງນີ້:

1. ນັກຄົ້ນຄວ້າວິທະຍາສາດ ລະດັບພື້ນຖານ ບໍ່ເກີນ ຫົກສິບຫ້າ ປີ;
2. ນັກຄົ້ນຄວ້າວິທະຍາສາດ ລະດັບປະສົບການ ບໍ່ເກີນ ຫົກສິບເຈັດ ປີ;
3. ນັກຄົ້ນຄວ້າວິທະຍາສາດ ລະດັບຊຳນານງານ ບໍ່ເກີນ ເຈັດສິບ ປີ;
4. ນັກຄົ້ນຄວ້າວິທະຍາສາດ ລະດັບຊ່ຽວຊານ ບໍ່ເກີນ ເຈັດສິບຫ້າ ປີ.

### ມາດຕາ 16 ການສິ້ນສຸດຕຳແໜ່ງນັກຄົ້ນຄວ້າວິທະຍາສາດ

ຕຳແໜ່ງນັກຄົ້ນຄວ້າວິທະຍາສາດ ຈະສິ້ນສຸດ ຕາມແຕ່ລະກໍລະນີ ດັ່ງນີ້:

1. ປະລະການຄົ້ນຄວ້າວິທະຍາສາດ;
2. ຂາດຈັນຍາບັນ ຂອງນັກຄົ້ນຄວ້າວິທະຍາສາດ;
3. ຖືກລຶບຊື່ ຈາກການເປັນພະນັກງານ-ລັດຖະກອນ ຫຼື ປົດຕຳແໜ່ງ;
4. ຄົບອາຍຸກະສຽນ ການເປັນນັກຄົ້ນຄວ້າວິທະຍາສາດ;
5. ເສຍກຳລັງແຮງງານ;
6. ລາອອກ ດ້ວຍຄວາມສະໝັກໃຈ;
7. ເສຍຊີວິດ.

## ໝວດທີ 4

## ສິດ, ພັນທະ, ຈັນຍາບັນ ແລະ ຈັນຍາທຳ ຂອງນັກຄົ້ນຄວ້າວິທະຍາສາດ

**ມາດຕາ 17 ສິດ ຂອງນັກຄົ້ນຄວ້າວິທະຍາສາດ**

ນັກຄົ້ນຄວ້າວິທະຍາສາດ ມີ ສິດ ດັ່ງນີ້:

1. ສຶກສາ, ຄົ້ນຄວ້າປະກົດການ, ກົດເກນທຳມະຊາດ, ສັງຄົມ ເພື່ອເປັນຫຼັກມູນພື້ນຖານທາງດ້ານວິທະຍາສາດ;

2. ຕີລາຄາສາເຫດ, ຄົ້ນຄວ້າ ເພື່ອຊອກຫາວິທີການແກ້ໄຂຜົນກະທົບ ທີ່ພົບເຫັນໃນການຄົ້ນຄວ້າ ພ້ອມທັງ ຮັບປະກັນການສະໜອງຂໍ້ມູນ ແລະ ຖ່າຍທອດ ຜົນການຄົ້ນຄວ້າວິທະຍາສາດ;

3. ໄດ້ຮັບການປົກປ້ອງຊັບສິນທາງປັນຍາ ແລະ ນຳໃຊ້ຄວາມກ້າວໜ້າ ທາງດ້ານວິທະຍາສາດ ແລະ ເຕັກໂນໂລຊີ ເຂົ້າໃນການຄົ້ນຄວ້າວິທະຍາສາດ;

4. ເຂົ້າເຖິງ ຫຼື ໄດ້ຮັບຂໍ້ມູນ ຂ່າວສານ, ການຊ່ວຍເຫຼືອ ດ້ານການເງິນ;

5. ນຳສະເໜີ ຫົວຂໍ້ ແລະ ຜົນງານການຄົ້ນຄວ້າວິທະຍາສາດ ຂອງຕົນ ຕໍ່ອົງການຈັດຕັ້ງ ທີ່ກ່ຽວຂ້ອງ ເພື່ອພິຈາລະນາ, ຢັ້ງຢືນ ແລະ ຮັບຮອງ;

6. ຖ່າຍທອດ, ໂອນ, ຈັດພິມ ແລະ ເຜີຍແຜ່ຜົນ ຂອງການຄົ້ນຄວ້າວິທະຍາສາດ ຂອງຕົນ;

7. ໄດ້ຮັບນະໂຍບາຍອຸດໜູນ, ການຍ້ອງຍໍ, ນາມມະຍົດ, ລາງວັນ ແລະ ນະໂຍບາຍອື່ນ ຕາມທີ່ໄດ້ກຳນົດໄວ້ ໃນດຳລັດສະບັບນີ້, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;

8. ໄດ້ຮັບຜົນປະໂຫຍດ ຈາກຜົນງານການຄົ້ນຄວ້າ ຂອງຕົນ ຕາມກົດໝາຍ ແລະ ສັນຍາ;

9. ເຂົ້າຮ່ວມການເຄື່ອນໄຫວວຽກງານວິທະຍາສາດ ຕາມສິດ ແລະ ຂອບເຂດຄວາມຮັບຜິດຊອບ ຂອງຕົນ ຢູ່ ພາຍໃນ ແລະ ຕ່າງປະເທດ;

10. ສະເໜີຂະແໜງການ ຫຼື ອົງການຈັດຕັ້ງ ທີ່ກ່ຽວຂ້ອງ ເພື່ອອຳນວຍຄວາມສະດວກໃນການດຳເນີນການຄົ້ນຄວ້າວິທະຍາສາດ;

11. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ ໃນກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

**ມາດຕາ 18 ພັນທະຂອງນັກຄົ້ນຄວ້າວິທະຍາສາດ**

ນັກຄົ້ນຄວ້າວິທະຍາສາດ ມີ ພັນທະ ດັ່ງນີ້:

1. ນຳໃຊ້ສະຕິປັນຍາ, ຄວາມຮູ້, ຄວາມສາມາດເຂົ້າໃນການຄົ້ນຄວ້າວິທະຍາສາດ ເພື່ອປະກອບສ່ວນໃນການພັດທະນາວິທະຍາສາດ, ເສດຖະກິດ-ສັງຄົມ ຂອງຊາດ, ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;

2. ຂໍອະນຸຍາດຫົວຂໍ້ທີ່ຕົນ ຈະຄົ້ນຄວ້າ ແລະ ຈົດທະບຽນ ຜົນສຳເລັດການຄົ້ນຄວ້າວິທະຍາສາດ ຕາມກົດໝາຍ;

3. ປະຕິບັດສັນຍາການຄົ້ນຄວ້າວິທະຍາສາດ;

4. ຮັກສາຄວາມລັບ ແລະ ປົກປ້ອງສິດຜົນປະໂຫຍດ ຂອງຊາດ ກ່ຽວກັບການຄົ້ນຄວ້າວິທະຍາສາດ;

5. ປະຕິບັດພັນທະ ຕໍ່ລັດຖະບານ ໃນກໍລະນີ ມີການຊື້ ຂາຍ ຜົນການຄົ້ນຄວ້າວິທະຍາສາດ ຊຶ່ງຕ້ອງປະຕິບັດ ຕາມລະບຽບການ ທີ່ກ່ຽວຂ້ອງ;

6. ປົກປັກຮັກສາສິ່ງແວດລ້ອມ ແລະ ປະຕິບັດ ຕາມລະບຽບການ ທີ່ກ່ຽວຂ້ອງ ໃນການດຳເນີນການຄົ້ນຄວ້າ ວິທະຍາສາດ;

7. ລາຍງານ ແລະ ສະໜອງຂໍ້ມູນ ປະຈຳປີ ເຂົ້າໃນລະບົບຖານຂໍ້ມູນສະພາວິທະຍາສາດແຫ່ງຊາດ;

8. ປະຕິບັດພັນທະອື່ນ ຕາມທີ່ກຳນົດໄວ້ ໃນກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

**ມາດຕາ 19 ຈັນຍາບັນ ແລະ ຈັນຍາທຳ ຂອງນັກຄົ້ນຄວ້າວິທະຍາສາດ**

ຈັນຍາບັນ ຂອງນັກຄົ້ນຄວ້າວິທະຍາສາດ ແມ່ນ ກິດການປະພຶດທີ່ ນັກຄົ້ນຄວ້າວິທະຍາສາດ ຕ້ອງເຄົາລົບ ຢ່າງເຂັ້ມງວດ.

ຈັນຍາທຳ ຂອງນັກຄົ້ນຄວ້າວິທະຍາສາດ ແມ່ນ ການເຄົາລົບ ແລະ ປະຕິບັດຕາມຫຼັກການຈັນຍາທຳການຄົ້ນຄວ້າວິທະຍາສາດ ໃນການຄົ້ນຄວ້າ.

ສຳລັບເນື້ອໃນລະອຽດກ່ຽວກັບ ຈັນຍາບັນ ແລະ ຈັນຍາທຳ ຂອງນັກຄົ້ນຄວ້າວິທະຍາສາດ ໄດ້ກຳນົດໄວ້ໃນ ລະບຽບການຕ່າງຫາກ.

## ໝວດທີ 5
## ການຄົ້ນຄວ້າວິທະຍາສາດ

**ມາດຕາ 20 ເງື່ອນໄຂດຳເນີນການຄົ້ນຄວ້າວິທະຍາສາດ**

ເງື່ອນໄຂດຳເນີນການຄົ້ນຄວ້າວິທະຍາສາດ ມີ ດັ່ງນີ້:

1. ການຈັດຕັ້ງ;
2. ສະຖານທີ່;
3. ບຸກຄະລາກອນ;
4. ເຄື່ອງມື ແລະ ອຸປະກອນເຕັກນິກ;
5. ຄວາມຮູ້ ແລະ ປະສົບການ ໃນການຄົ້ນຄວ້າວິທະຍາສາດ.

**ມາດຕາ 21 ເອກະສານປະກອບການຂໍອະນຸຍາດດຳເນີນການຄົ້ນຄວ້າວິທະຍາສາດ**

ເອກະສານປະກອບການຂໍອະນຸຍາດ ດຳເນີນການຄົ້ນຄວ້າວິທະຍາສາດ ມີ ດັ່ງນີ້:

1. ໜັງສືສະເໜີຂໍອະນຸຍາດ ດຳເນີນການຄົ້ນຄວ້າວິທະຍາສາດ ຕາມແບບພິມ ທີ່ກຳນົດໃຫ້;
2. ບົດສະເໜີຫົວຂໍ້ຄົ້ນຄວ້າວິທະຍາສາດ;
3. ໃບຢັ້ງຢືນ ເອກະສານ ແລະ ຂໍ້ມູນ ທີ່ກ່ຽວຂ້ອງ;
4. ປະຫວັດການວິໄຈ, ການຄົ້ນຄ້ວາ ຂອງນັກຄົ້ນຄວ້າວິທະຍາສາດ;
5. ເອກະສານ ອື່ນທີ່ຈຳເປັນ.

**ມາດຕາ 22 ການຂໍອະນຸຍາດດຳເນີນການຄົ້ນຄວ້າວິທະຍາສາດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງດຳເນີນການຄົ້ນຄວ້າວິທະຍາສາດ ຕ້ອງມີ ເງື່ອນໄຂ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 20 ແລະ ໃຫ້ປະກອບເອກະສານ ຕາມທີ່ໄດ້ກຳນົດໄວ້ ໃນມາດຕາ 21 ຂອງດຳລັດສະບັບນີ້ ແລ້ວຍື່ນຕໍ່ສະພາວິທະຍາສາດແຫ່ງຊາດ ຜ່ານສະພາວິທະຍາສາດ ຂອງຂະແໜງການ ໂດຍມີການປະສານສົມທົບກັບ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ຂັ້ນແຂວງ ທີ່ກ່ຽວຂ້ອງ.

**ມາດຕາ 23 ການພິຈາລະນາອະນຸຍາດ ໃຫ້ດຳເນີນການຄົ້ນຄວ້າວິທະຍາສາດ**

ສະພາວິທະຍາສາດ ແຫ່ງຊາດ ເປັນຜູ້ ພິຈາລະນາ ກ່ຽວກັບການອະນຸຍາດ ໃຫ້ດຳເນີນການຄົ້ນຄວ້າວິທະຍາສາດ ພາຍຫຼັງທີ່ໄດ້ຮັບໜັງສືສະເໜີ ແລະ ເອກະສານປະກອບ ຈາກສະພາວິທະຍາສາດ ຂອງຂະແໜງການ ສອງຄັ້ງ ຕໍ່ປີ ແລະ ແຈ້ງຜົນການພິຈາລະນາ ເປັນລາຍລັກອັກສອນ ພາຍໃນ ສິບຫ້າ ວັນ ນັບແຕ່ວັນສະພາວິທະຍາສາດແຫ່ງຊາດ ຕົກລົງເປັນຕົ້ນໄປ.

## ໝວດທີ 6
## ຜົນປະໂຫຍດ ຂອງນັກຄົ້ນຄວ້າວິທະຍາສາດ ແລະ ເຈົ້າຂອງຜົນງານການຄົ້ນຄວ້າວິທະຍາສາດ

**ມາດຕາ 24 ຜົນປະໂຫຍດ ຂອງນັກຄົ້ນຄວ້າວິທະຍາສາດ**

ນັກຄົ້ນຄວ້າວິທະຍາສາດ ຈະໄດ້ຮັບຜົນປະໂຫຍດ ຈາກຜົນການຄົ້ນຄວ້າວິທະຍາສາດ ຂອງຕົນ ທີ່ສາມາດນຳໃຊ້ເຂົ້າໃນ ການຜະລິດ ແລະ ການບໍລິການ ຕາມທີ່ໄດ້ຕົກລົງກັນໄວ້ໃນສັນຍາ ກັບຜູ້ນຳໃຊ້ຜົນງານການຄົ້ນຄວ້າວິທະຍາສາດ.

ໃນກໍລະນີນັກຄົ້ນຄວ້າວິທະຍາສາດ ທີ່ໃຫ້ບໍລິການ ການຄົ້ນຄວ້າວິທະຍາສາດແກ່ຜູ້ອື່ນ ຈະໄດ້ຮັບຜົນປະໂຫຍດຈາກຜົນງານການຄົ້ນຄວ້າ ຂອງຕົນ ຕາມທີ່ໄດ້ຕົກລົງກັນ.

**ມາດຕາ 25 ຜົນປະໂຫຍດ ຂອງເຈົ້າຂອງຜົນງານການຄົ້ນຄວ້າວິທະຍາສາດ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ເປັນເຈົ້າ ຂອງຜົນງານ ການຄົ້ນຄວ້າວິທະຍາສາດ ຈະໄດ້ຮັບຜົນປະໂຫຍດ ຈາກຜົນງານການຄົ້ນຄວ້າວິທະຍາສາດ ຂອງຕົນ ຕາມທີ່ໄດ້ຕົກລົງກັນໄວ້ ໃນສັນຍາກັບນັກຄົ້ນຄວ້າວິທະຍາສາດ.

## ໝວດທີ 7
## ນາມມະຍົດ ແລະ ລາງວັນ ນັກຄົ້ນຄວ້າວິທະຍາສາດ

**ມາດຕາ 26 ນາມມະຍົດນັກຄົ້ນຄວ້າວິທະຍາສາດ**

ນາມມະຍົດນັກຄົ້ນຄວ້າວິທະຍາສາດ ແມ່ນ ການຍັ້ງຍືນຜົນງານ ໂດດເດັ່ນ ເປັນພິເສດ ແລະ ຄຸນງາມຄວາມດີ, ການອຸທິດເຫື່ອແຮງ ແລະ ສະຕິປັນຍາ ຂອງນັກຄົ້ນຄວ້າວິທະຍາສາດ ທີ່ປະສົບຜົນສຳເລັດໃນການຄົ້ນຄວ້າວິທະຍາສາດ ຊຶ່ງເປັນທີ່ຍອມຮັບ ຂອງສັງຄົມ ແລະ ໄດ້ສ້າງປະໂຫຍດອັນໃຫຍ່ຫຼວງ ໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ ຢ່າງຕໍ່ເນື່ອງ.

ນາມມະຍົດ ນັກຄົ້ນຄວ້າວິທະຍາສາດ ມີ ສອງ ປະເພດ ດັ່ງນີ້:

1. ນັກຄົ້ນຄວ້າວິທະຍາສາດ ແຫ່ງຊາດ;
2. ນັກຄົ້ນຄວ້າວິທະຍາສາດ ດີເດັ່ນ.

**ມາດຕາ 27 ນາມມະຍົດນັກຄົ້ນຄວ້າວິທະຍາສາດ ແຫ່ງຊາດ**

ນາມມະຍົດນັກຄົ້ນຄວ້າວິທະຍາສາດ ແຫ່ງຊາດ ແມ່ນ ນາມມະຍົດ ໂດຍການຮັບຮອງ ຂອງປະທານປະເທດແຫ່ງ ສປປ ລາວ, ຜູ້ທີ່ໄດ້ຮັບນາມມະຍົດ ຈະໄດ້ຮັບການປະດັບຫຼຽນນາມມະຍົດວິທະຍາສາດ ແຫ່ງຊາດ.

ໃນກໍລະນີ ນັກຄົ້ນຄວ້າວິທະຍາສາດ ທີ່ສາມາດຄົ້ນຄວ້າໃນຫົວຂໍ້ ໃດໜຶ່ງ ຊຶ່ງເປັນບັນຫາໃໝ່ ທີ່ໂລກ ຍອມຮັບ ກໍສາມາດໄດ້ຮັບນາມມະຍົດ ແລະ ປະດັບຫຼຽນນາມມະຍົດວິທະຍາສາດ ແຫ່ງຊາດ.

**ມາດຕາ 28 ນາມມະຍົດນັກຄົ້ນຄວ້າວິທະຍາສາດ ດີເດັ່ນ**

ນາມມະຍົດນັກຄົ້ນຄວ້າວິທະຍາສາດດີເດັ່ນ ແມ່ນ ນາມມະຍົດ ໂດຍການຮັບຮອງ ຂອງນາຍົກລັດຖະມົນຕີ ແຫ່ງ ສປປ ລາວ, ຜູ້ທີ່ໄດ້ຮັບນາມມະຍົດ ຈະໄດ້ຮັບການປະດັບຫຼຽນນາມມະຍົດວິທະຍາສາດ ດີເດັ່ນ.

ໃນກໍລະນີ ນັກຄົ້ນຄວ້າວິທະຍາສາດທີ່ສາມາດຄົ້ນຄວ້າ ໃນຫົວຂໍ້ ໃດໜຶ່ງ ຊຶ່ງເປັນບັນຫາໃໝ່ ທີ່ຂົງເຂດພາກພື້ນຍອມຮັບ ກໍສາມາດໄດ້ຮັບນາມມະຍົດ ແລະ ປະດັບຫຼຽນນາມມະຍົດວິທະຍາສາດ ດີເດັ່ນ.

**ມາດຕາ 29 ເງື່ອນໄຂນາມມະຍົດນັກຄົ້ນຄວ້າວິທະຍາສາດ ແຫ່ງຊາດ**

ເງື່ອນໄຂນາມມະຍົດນັກຄົ້ນຄວ້າວິທະຍາສາດແຫ່ງຊາດ ມີ ດັ່ງນີ້:

1. ມີຜົນງານດີເດັ່ນເປັນພິເສດ, ອຸທິດສະຕິປັນຍາ ແລະ ເຫື່ອແຮງ ໃຫ້ແກ່ການຄົ້ນຄວ້າວິທະຍາສາດຢ່າງຕໍ່ເນື່ອງ ສິບຫ້າ ປີ;

2. ເປັນນັກຄົ້ນຄວ້າວິທະຍາສາດ ທີ່ມີເງື່ອນໄຂຄົບຖ້ວນ ຕາມມາດຕາ 11 ແລະ 12 ຂອງດໍາລັດສະບັບນີ້;

3. ມີຜົນງານຄົ້ນຄວ້າວິທະຍາສາດ ທີ່ໄດ້ເຜີຍແຜ່ອອກສູ່ສັງຄົມ ແລະ ຕີພິມໃນວາລະສານ ທັງພາຍໃນ ແລະ ຕ່າງປະເທດ ຊຶ່ງສາມາດນໍາໃຊ້ ເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ ຢ່າງກວ້າງຂວາງ;

4. ໄດ້ຮັບນາມມະຍົດນັກຄົ້ນຄວ້າວິທະຍາສາດ ດີເດັ່ນ ມາກ່ອນ.

**ມາດຕາ 30 ເງື່ອນໄຂນາມມະຍົດນັກຄົ້ນຄວ້າວິທະຍາສາດ ດີເດັ່ນ**

ເງື່ອນໄຂນາມມະຍົດນັກຄົ້ນຄວ້າວິທະຍາສາດ ດີເດັ່ນ ມີ ດັ່ງນີ້:

1. ມີຜົນງານດີເດັ່ນ ເປັນພິເສດ, ອຸທິດສະຕິປັນຍາ ແລະ ເຫື່ອແຮງ ໃຫ້ແກ່ການຄົ້ນຄວ້າວິທະຍາສາດຢ່າງຕໍ່ເນື່ອງ ສິບປີ;

2. ເປັນນັກຄົ້ນຄວ້າວິທະຍາສາດ ທີ່ມີເງື່ອນໄຂຄົບຖ້ວນ ຕາມມາດຕາ 9 ແລະ 10 ຂອງດໍາລັດສະບັບນີ້;

3. ມີຜົນງານຄົ້ນຄວ້າວິທະຍາສາດ ທີ່ໄດ້ເຜີຍແຜ່ອອກສູ່ສັງຄົມ ແລະ ຕີພິມ ໃນວາລະສານ ທັງພາຍໃນ ແລະ ຕ່າງປະເທດ ຊຶ່ງສາມາດນໍາໃຊ້ເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ ຢ່າງກວ້າງຂວາງ;

4. ໄດ້ຮັບລາງວັນວິທະຍາສາດໃດໜຶ່ງມາກ່ອນ.

**ມາດຕາ 31 ການສະເໜີຂໍນາມມະຍົດນັກຄົ້ນຄວ້າວິທະຍາສາດ**

ສະພາວິທະຍາສາດ ແຫ່ງຊາດ ແລະ ສະພາວິທະຍາສາດ ຂອງຂະແໜງການ ເປັນຜູ້ປະເມີນຜົນງານ ຂອງນັກຄົ້ນຄວ້າວິທະຍາສາດ ຫ້າ ປີ ຕໍ່ຄັ້ງ.

ສະພາວິທະຍາສາດ ແຫ່ງຊາດ ເປັນຜູ້ສະເໜີຕໍ່ ລັດຖະບານ ພິຈາລະນາ ກ່ຽວກັບນາມມະຍົດນັກຄົ້ນຄວ້າວິທະຍາສາດ ຕາມທີ່ໄດ້ກໍານົດໄວ້ໃນລະບຽບການ ທີ່ກ່ຽວຂ້ອງ.

**ມາດຕາ 32 ລາງວັນວິທະຍາສາດ**

ລາງວັນວິທະຍາສາດ ແມ່ນ ການຍ້ອງຍໍ, ຊົມເຊີຍ ແລະ ສົມລະເສີນຜົນງານ ຂອງນັກຄົ້ນຄວ້າວິທະຍາສາດ, ນັກປະດິດຄິດແຕ່ງ, ສ້າງນະວັດຕະກໍາໃໝ່ ທີ່ໄດ້ປະກອບສ່ວນສ້າງປະໂຫຍດ ໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ ຂອງຊາດ.

ລາງວັນວິທະຍາສາດ ມີ ສາມ ລະດັບ ດັ່ງນີ້:

1. ລາງວັນລະດັບຊາດ;

2. ລາງວັນລະດັບກະຊວງ;

3. ລາງວັນລະດັບທ້ອງຖິ່ນ.

ລາງວັນວິທະຍາສາດ ແຕ່ລະລະດັບ ປະກອບດ້ວຍ ສັນຍາລັກ, ລາງວັນ ແລະ ເງິນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 33 ລາງວັນລະດັບຊາດ**

ລາງວັນລະດັບຊາດ ແມ່ນ ລາງວັນ ທີ່ມອບໂດຍນາຍົກລັດຖະມົນຕີ ໃຫ້ແກ່ນັກຄົ້ນຄວ້າວິທະຍາສາດ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຜົນງານການຄົ້ນຄວ້າ ແລະ ພັດທະນານະວັດຕະກຳ ທີ່ໂດດເດັ່ນ ທີ່ໄດ້ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ.

**ມາດຕາ 34 ລາງວັນລະດັບກະຊວງ**

ລາງວັນລະດັບກະຊວງ ແມ່ນ ລາງວັນ ທີ່ມອບໂດຍລັດຖະມົນຕີ ກະຊວງສຶກສາທິການ ແລະ ກິລາ ໃຫ້ແກ່ນັກຄົ້ນຄວ້າວິທະຍາສາດ ທັງພາຍໃນ ແລະ ຕ່າງປະເທດ ທີ່ມີຜົນງານການຄົ້ນຄວ້າ, ພັດທະນານະວັດຕະກຳ ທີ່ມີລັກສະນະກ້າວໜ້າ, ໂດດເດັ່ນ, ຢູ່ ກະຊວງ, ອົງການ ທີ່ໄດ້ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ.

**ມາດຕາ 35 ລາງວັນລະດັບທ້ອງຖິ່ນ**

ລາງວັນລະດັບທ້ອງຖິ່ນ ແມ່ນ ລາງວັນ ທີ່ມອບ ໂດຍປະທານຄະນະກຳມະການປົກຄອງນະຄອນຫຼວງ, ປະທານຄະນະກຳມະການປົກຄອງແຂວງ, ໃຫ້ແກ່ນັກຄົ້ນຄວ້າວິທະຍາສາດ ພາຍໃນນະຄອນຫຼວງ, ແຂວງ, ທີ່ມີຜົນງານການຄົ້ນຄວ້າ, ພັດທະນານະວັດຕະກຳ ທີ່ມີລັກສະນະກ້າວໜ້າ, ໂດດເດັ່ນ, ຢູ່ ນະຄອນຫຼວງ, ແຂວງ, ທີ່ໄດ້ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງນະຄອນຫຼວງ, ແຂວງ.

**ມາດຕາ 36 ເງື່ອນໄຂຜູ້ໄດ້ຮັບລາງວັນວິທະຍາສາດລະດັບຊາດ**

ຜູ້ ທີ່ໄດ້ຮັບລາງວັນວິທະຍາສາດ ລະດັບຊາດ ມີ ເງື່ອນໄຂ ດັ່ງນີ້:

1. ມີຜົນງານ ດີເດັ່ນ, ອຸທິດສະຕິປັນຍາ ແລະ ເຫື່ອແຮງໃຫ້ແກ່ການຄົ້ນຄວ້າວິທະຍາສາດ ຢ່າງຕໍ່ເນື່ອງ;

2. ເປັນນັກຄົ້ນຄວ້າວິທະຍາສາດ ທີ່ມີເງື່ອນໄຂຄົບຖ້ວນ ຕາມມາດຕາ 11 ແລະ 12 ຂອງດຳລັດສະບັບນີ້;

3. ມີຜົນງານຄົ້ນຄວ້າວິທະຍາສາດ ທີ່ໄດ້ເຜີຍແຜ່ອອກສູ່ສັງຄົມ ແລະ ຕີພິມໃນວາລະສານ ທັງພາຍໃນ ແລະ ຕ່າງປະເທດ ຊຶ່ງສາມາດນຳໃຊ້ເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ;

4. ໄດ້ຮັບລາງວັນວິທະຍາສາດ ລະດັບກະຊວງ, ອົງການ ມາກ່ອນ.

**ມາດຕາ 37 ເງື່ອນໄຂຜູ້ໄດ້ຮັບລາງວັນວິທະຍາສາດລະດັບກະຊວງ**

ຜູ້ທີ່ໄດ້ຮັບລາງວັນວິທະຍາສາດ ລະດັບກະຊວງ ມີ ເງື່ອນໄຂ ດັ່ງນີ້:

1. ມີຜົນງານດີເດັ່ນ, ອຸທິດສະຕິປັນຍາ ແລະ ເຫື່ອແຮງ ໃຫ້ແກ່ການຄົ້ນຄວ້າວິທະຍາສາດ ຢ່າງຕໍ່ເນື່ອງ;

2. ເປັນນັກຄົ້ນຄວ້າວິທະຍາສາດ ທີ່ມີເງື່ອນໄຂຄົບຖ້ວນ ຕາມມາດຕາ 9 ແລະ ມາດຕາ 10 ຂອງດຳລັດ ສະບັບນີ້;

3. ມີຜົນງານຄົ້ນຄວ້າວິທະຍາສາດ ທີ່ໄດ້ເຜີຍແຜ່ອອກສູ່ສັງຄົມ ແລະ ຕີພິມໃນວາລະສານ ທັງພາຍໃນ ແລະ ຕ່າງປະເທດ ຊຶ່ງສາມາດນຳໃຊ້ເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ;

4. ໄດ້ຮັບລາງວັນວິທະຍາສາດ ໃດໜຶ່ງ ມາກ່ອນ.

**ມາດຕາ 38 ການສະເໜີຂໍລາງວັນວິທະຍາສາດ**

ສະພາວິທະຍາສາດ ແຫ່ງຊາດ ແລະ ສະພາວິທະຍາສາດ ຂອງຂະແໜງການ ເປັນຜູ້ປະເມີນຜົນງານ ຂອງນັກຄົ້ນຄວ້າວິທະຍາສາດ ຫ້າປີ ຕໍ່ຄັ້ງ ເພື່ອສະເໜີຕໍ່ລັດຖະບານ ພິຈາລະນາ ກ່ຽວກັບລາງວັນລະດັບຊາດ ຕາມທີ່ໄດ້ກຳນົດໄວ້ ໃນລະບຽບການທີ່ກ່ຽວຂ້ອງ.

ສະພາວິທະຍາສາດ ຂອງຂະແໜງການ ເປັນຜູ້ປະເມີນຜົນງານ ຂອງນັກຄົ້ນຄວ້າວິທະຍາສາດ ສາມປີ ຕໍ່ຄັ້ງ ເພື່ອສະເໜີຕໍ່ກະຊວງສຶກສາທິການ ແລະ ກິລາ ພິຈາລະນາ ກ່ຽວກັບລາງວັນ ລະດັບກະຊວງ, ອົງການ, ອົງການປົກຄອງນະຄອນຫຼວງ, ແຂວງ ພິຈາລະນາກ່ຽວກັບລາງວັນ ລະດັບທ້ອງຖິ່ນ ຕາມທີ່ໄດ້ກຳນົດໄວ້ໃນລະບຽບການທີ່ກ່ຽວຂ້ອງ.

## ໝວດທີ 8
## ຂໍ້ຫ້າມ

**ມາດຕາ 39 ຂໍ້ຫ້າມ ທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີ ພຶດຕິກຳ ດັ່ງນີ້:

1. ສ້າງອຸປະສັກ, ຂັດຂວາງການຄົ້ນຄວ້າວິທະຍາສາດ;
2. ແອບອ້າງເອົາຜົນງານ ການຄົ້ນຄວ້າວິທະຍາສາດ ຂອງຜູ້ອື່ນ ມາເປັນຂອງຕົນ;
3. ເຜີຍແຜ່ ຫຼື ນຳເອົາຜົນການຄົ້ນຄວ້າວິທະຍາສາດ ໄປດຳເນີນທຸລະກິດ ໂດຍບໍ່ຖືກຕ້ອງຕາມ ກົດໝາຍ;
4. ມີພຶດຕິກຳອື່ນ ທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

**ມາດຕາ 40 ຂໍ້ຫ້າມ ສຳລັບນັກຄົ້ນຄວ້າວິທະຍາສາດ**

ຫ້າມ ນັກຄົ້ນຄວ້າວິທະຍາສາດ ມີ ພຶດຕິກຳ ດັ່ງນີ້:

1. ເຮັດການຄົ້ນຄວ້າວິທະຍາສາດ ໃນຫົວຂໍ້ ທີ່ຂັດກັບ ແນວທາງ ນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ, ລະບຽບການ ແລະ ຮີດຄອງປະເພນີອັນດີງາມ ຂອງຊາດ;
2. ເຜີຍແຜ່ຜົນການຄົ້ນຄວ້າວິທະຍາສາດ ທີ່ພົວພັນກັບຄວາມລັບ, ຄວາມໝັ້ນຄົງ ຂອງຊາດ;
3. ຂາດຄວາມຮັບຜິດຊອບ ຕໍ່ການຄົ້ນຄວ້າວິທະຍາສາດ ຂອງຕົນ;
4. ສວຍໃຊ້ ໜ້າທີ່, ຕຳແໜ່ງ ເພື່ອຫາຜົນປະໂຫຍດ ສ່ວນຕົວ, ຄອບຄົວ ແລະ ພັກພວກຕົນ;
5. ບິດເບືອນຄວາມເປັນຈິງ ກ່ຽວກັບຜົນການຄົ້ນຄວ້າວິທະຍາສາດ;
6. ແອບອ້າງເອົາການຄົ້ນຄວ້າວິທະຍາສາດ ຂອງຜູ້ອື່ນ ມາເປັນ ຂອງຕົນ;
7. ມີພຶດຕິກຳອື່ນ ທີ່ເປັນການລະເມີດ ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

**ມາດຕາ 41 ຂໍ້ຫ້າມ ສຳລັບພະນັກງານ-ລັດຖະກອນ ທີ່ກ່ຽວຂ້ອງ**

ຫ້າມພະນັກງານ-ລັດຖະກອນ ມີ ພຶດຕິກຳ ດັ່ງນີ້:

1. ສວຍໃຊ້ໜ້າທີ່, ຕຳແໜ່ງ ເພື່ອບັງຄັບ, ນາບຂູ່ ແລະ ສົມຮູ້ຮ່ວມຄິດກັບຜູ້ອື່ນ ເພື່ອຫາຜົນປະໂຫຍດສ່ວນຕົວ, ຄອບຄົວ ແລະ ພັກພວກຕົນ;

2. ທວງເອົາ, ຂໍເອົາ, ຮັບເອົາ, ເປັນສື່ກາງໃນການ ທວງເອົາ, ຂໍເອົາ ຫຼື ຮັບເອົາ ສິນບົນ ຫຼື ຜົນປະໂຫຍດອື່ນ;

3. ກົດໜ່ວງ, ຖ່ວງດຶງ, ແກ່ຍາວເວລາ ໃນການພິຈາລະນາ ເອກະສານ ກ່ຽວກັບວຽກງານ ຄົ້ນຄວ້າວິທະຍາສາດ;

4. ເປີດເຜີຍຄວາມລັບທາງລັດຖະການ ກ່ຽວກັບການຄົ້ນຄວ້າວິທະຍາສາດ ແລະ ພັດທະນາເຕັກໂນໂລຊີ;

5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

## ໝວດທີ 9
## ການຄຸ້ມຄອງ ແລະ ການກວດກາ

### ມາດຕາ 42 ອົງການຄຸ້ມຄອງ ແລະ ກວດກາ

ລັດຖະບານ ເປັນຜູ້ຄຸ້ມຄອງ ນັກຄົ້ນຄວ້າວິທະຍາສາດ ໂດຍມອບໃຫ້ສະພາວິທະຍາສາດ ແຫ່ງຊາດ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການປະສານສົມທົບກັບ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງ ແລະ ກວດກາ ນັກຄົ້ນຄວ້າວິທະຍາສາດ ປະກອບດ້ວຍ:

1. ສະພາວິທະຍາສາດ ແຫ່ງຊາດ;
2. ກະຊວງສຶກສາທິການ ແລະ ກິລາ;
3. ສະພາວິທະຍາສາດ ຂອງຂະແໜງການ.

### ມາດຕາ 43 ສິດ ແລະ ໜ້າທີ່ ຂອງອົງການຄຸ້ມຄອງ ແລະ ກວດກາ

ສິດ ແລະ ໜ້າທີ່ ຂອງອົງການຄຸ້ມຄອງ ແລະ ກວດກາ ວຽກງານນັກຄົ້ນຄວ້າວິທະຍາສາດ, ການຄົ້ນຄວ້າວິທະຍາສາດ ຕາມທີ່ໄດ້ກຳນົດໄວ້ ໃນກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

## ໝວດທີ 10
## ນະໂຍບາຍ ຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

### ມາດຕາ 44 ນະໂຍບາຍ ຕໍ່ຜູ້ມີຜົນງານ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມກົດໝາຍ ແລະ ລະບຽບການ.

### ມາດຕາ 45 ມາດຕະການ ຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດດຳລັດສະບັບນີ້ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກລົງໂທດທາງອາຍາ ຕາມກົດໝາຍ ແລະ ລະບຽບການ.

## ໝວດທີ 11

## ບົດບັນຍັດສຸດທ້າຍ

**ມາດຕາ 46 ການຈັດຕັ້ງປະຕິບັດ**

ມອບໃຫ້ກະຊວງສຶກສາທິການ ແລະ ກິລາ, ສະພາວິທະຍາສາດ ແຫ່ງຊາດ ເປັນເຈົ້າການປະສານສົມທົບກັບ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດ ດຳລັດສະບັບນີ້ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ.

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ, ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຈົ່ງຮັບຮູ້ ແລະ ປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 47 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນທີ 30 ມິຖຸນາ 2025 ເປັນຕົ້ນໄປ.

ຕາງໜ້າ ລັດຖະບານ ແຫ່ງ ສປປ ລາວ

**ນາຍົກລັດຖະມົນຕີ**

ສອນໄຊ ສີພັນດອນ